# ເສັ້ນທາງການຂົນສົ່ງແຫ່ງຄຳ ປາກົດມີພະລັງຊີວິດອັນແຂງແຮງ

“ມາທ່ຽວລາວເປັນຄັ້ງທຳອິດ, ດີໃຈທີ່ສຸດ. ທາງລົດໄຟ ລາວ-ຈີນ ໄດ້ເປີດນຳໃຊ້ ເປັນເວລາດົນນານພໍສົມຄວນ, ພວກເຮົາຢາກມາທ່ຽວລາວເປັນຢ່າງຍິ່ງ.” ຂະບວນລົດໄຟທ່ອງທ່ຽວຂ້າມຊາດ ລະຫວ່າງ ນະຄອນຫຼວງປັກກິ່ງຫານະຄອນຫຼວງວຽງຈັນ ຖ້ຽວທຳອິດໃນປີ 2024 ໄດ້ອອກເດີນທາງຈາກນະຄອນຫຼວງປັກກິ່ງ ໃນວັນທີ 18 ມີນານີ້, ພາຍຫຼັງໄດ້ລົງຈອດຢູ່ແຫຼ່ງທ່ອງທ່ຽວນະຄອນຈ່າງເຈ່ຍເຈ້ຍ (Zhangjiajie) ແລະ ນະຄອນຄຸນໝິງ (Kunming) ແລ້ວກໍໄດ້ເດີນທາງໄປເຖິງປະເທດລາວ ໃນວັນທີ 22 ມີນານີ້. ນັກທ່ອງທ່ຽວທັງຫຼາຍ ເວົ້າດ້ວຍຄວາມດີໃຈວ່າ, ພວກເຮົາຢາກຊອກຮູ້ປະຫວັດສາດ ແລະ ວັດທະນະທຳຂອງປະເທດລາວ, ຊີມອາຫານທີ່ແຊບຊ້ອຍຂອງປະເທດລາວ, ພວກເຮົາໄດ້ສະໝັກກຸ່ມທ່ອງທ່ຽວ ໃນຕອນທາກໍເປີດຮັບນັກທ່ອງທ່ຽວ.



ນີ້ໄດ້ສ່ອງແສງໃຫ້ເຫັນເຖິງສະພາບການຂົນສົ່ງຜູ້ໂດຍສານຕາມທາງລົດໄຟ ລາວ-ຈີນ ທີ່ໄດ້ຮັກສາການເຕີບໂຕເປັນ 6 ເດືອນລຽນຕິດ ນັບແຕ່ເດືອນກັນຍາປີ 2023 ເປັນຕົ້ນມາ. ໃນ 6 ເດືອນຜ່ານມາ, ຈຳນວນຂົນສົ່ງຜູ້ໂດຍສານຕາມທາງລົດໄຟ ລາວ-ຈີນ ໄດ້ຮັກສາການເຕີບໂຕຢ່າງຕໍ່ເນື່ອງ ແລະ ໄດ້ຂົນສົ່ງຜູ້ໂດຍສານທັງໝົດ ຫຼາຍກວ່າ 5 ລ້ານເທື່ອຄົນ ນັບແຕ່ຕົ້ນປີນີ້ມາ.

ໃນຂະນະດຽວກັນ, ການຂົນສົ່ງສິນຄ້າ ຕາມທາງລົດໄຟ ລາວ-ຈີນ ກໍໄດ້ເພີ່ມຂຶ້ນຢ່າງໜັກແໜ້ນ. ມາຮອດວັນທີ 19 ມີນານີ້, ຂະບວນລົດໄຟ ຂົນສົ່ງສິນຄ້າສາກົນ ຕາມທາງລົດໄຟ ລາວ-ຈີນ ໄດ້ມີຫຼາຍກວ່າ 9.000 ຖ້ຽວ, ໄດ້ຂົນສົ່ງສິນຄ້າທັງໝົດ 7,95 ລ້ານໂຕນ. ຂະບວນລົດໄຟນະຄອນຊຽງໄຮ້ຫາແຂວງຢຸນນານ + ຂະບວນລົດໄຟແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ ແລະ ຂະບວນລົດໄຟ ລາວ-ຈີນ + ຂະບວນລົດໄຟຈີນ-ເອີຣົບ ເປັນຕົ້ນໄດ້ມີຫຼາຍກວ່າ 984 ຖ້ຽວ. ໃນນັ້ນ, ຮູບແບບການຂົນສົ່ງສາກົນໃໝ່ ຂະບວນລົດໄຟ ລາວ-ຈີນ + ຂະບວນລົດໄຟຈີນ-ເອີຣົບ ໄດ້ເຮັດໃຫ້ເວລາຂົນສົ່ງສິນຄ້າຈາກລາວ ແລະ ໄທ ໄປຫາ ເອີຣົບ ໄດ້ຫຼຸດລົງເຫຼືອພຽງ 15 ວັນເທົ່ານັ້ນ.

ພາຍໃຕ້ການຊຸກຍູ້ຂອງທາງລົດໄຟ ລາວ-ຈີນ, ການກໍ່ສ້າງຊ່ອງທາງຂົນສົ່ງທາງບົກທາງທະເລສາກົນຂອງແຂວງຢຸນນານ ທີ່ອ່ວຍໜ້າໄປສູ່ມະຫາສະໝຸດອິນເດຍ ໄດ້ປະສົບຜົນສຳເລັດໃໝ່. ນັບລວມແລ້ວ, ໄດ້ຫຼຸດຕົ້ນທຶນດ້ານການຈໍລະຈອນສິນຄ້າ ໃຫ້ແກ່ວິສາຫະກິດຕ່າງໆ ຫຼາຍກວ່າ 900 ລ້ານຢວນ.

ແຫຼ່ງຂ່າວ: ໜັງສືພິມລາຍວັນຢຸນນານ, ເວັບໄຊ CCTV



# ການຍ່າງທ່ຽວແຂວງຢຸນນານ ເລີ່ມຈາກການຢ້ຽມຢາມບ້ານເກີດຂອງທ່ານເຈີ້ງເຫີ

ທ່ານ ຢາງເພີຍຢວນ (Yang Peiyuan) ແລະ ນາງ ອູໄອ້ລິງ (Wu Ailing) ລ້ວນແຕ່ແມ່ນຄູສອນ ຊາວມາເລເຊຍເຊື້ອສາຍແຂວງຝູຈຽນຈີນ. ຫວ່າງກ່ອນນີ້ບໍ່ດົນ, ຄູສອນທັງສອງຄົນດັ່ງກ່າວ ໄດ້ເລີ່ມການຍ່າງທ່ຽວແຂວງຢຸນນານ ໂດຍເລີ່ມຈາກເມືອງຈິ້ນໜິງ (Jinning) ນະຄອນຄຸນໝິງ.

ທ່ານ ຢາງເພີຍຢວນ ກ່າວວ່າ: “ໃນເວລາຂ້ອຍຍັງເປັນໄວໜຸ່ມ, ຂ້ອຍໄດ້ອ່ານປຶ້ມຫຼາຍຫົວກ່ຽວກັບ ທ່ານເຈີ້ງເຫີ (Zheng He) ແລະ ຍັງໄດ້ເດີນທາງໄປເຖິງຫຼາຍສະຖານທີ່ຂອງມາເລເຊຍ ທີ່ທ່ານເຈີ້ງເຫີ ເຄີຍໄປ. ຫຼາຍປີຜ່ານໄປ, ຂ້ອຍມີໂອກາດໄປຢ້ຽມຊົມບ້ານເກີດຂອງທ່ານ, ຂ້ອຍຮູ້ສຶກໂຊກດີຫຼາຍ.”

ທ່ານ ເຈີ້ງເຫີ ເປັນຄົນເມືອງຈິ້ນໜິງ ນະຄອນຄຸນໝິງ ແຂວງຢຸນນານ, ເປັນນັກເດີນເຮືອທາງທະເລ ແລະ ນັກການທູດ ໃນລາຊະວົງໝິງຂອງຈີນ. ໃນປີ 1405, ຂະບວນກຳປັ່ນຂະໜາດໃຫຍ່ ທີ່ນຳພາໂດຍ ທ່ານ ເຈີ້ງເຫີ ໄດ້ເດີນເຮືອອອກຈາກແຂວງຈຽງຊູ (Jiangsu) ຈີນ ຊຶ່ງເປັນການເປີດສາກການເດີນເຮືອໄປສູ່ຕ່າງປະເທດຂອງ ທ່ານ ເຈີ້ງເຫີ ຊຶ່ງໄດ້ ມີຂຶ້ນກ່ອນການເດີນເຮືອໄປສູ່ທິດຕາເວັນຕົກຂອງ ທ່ານ ຄຣິສ ໂຕເຟີ ໂກລຸມບຸສ ຂອງປະເທດແອັສປາຍ 87 ປີ ແລະ ກ່ອນການເດີນເຮືອອ້ອມສິ້ນໃຕ້ສຸດຂອງອາຟຣິກາຂອງທ່ານວາສໂກ ດາກາມາ ຂອງປະເທດປອກຕຸຍການ 92 ປີ. ທ່ານ ເຈີ້ງເຫີ ເຄີຍເດີນເຮືອໄປຢ້ຽມຢາມ 30 ກວ່າປະເທດ ແລະ ເຂດແຄວ້ນຂອງອາຊີ ແລະ ອາຟຣິກາ ເພິ່ນໄດ້ປູກແນວພັນມິດຕະພາບ ລະຫວ່າງ ຈີນກັບຫຼາຍປະເທດ ໃນທະວີບອາຊີ ແລະ ອາຟຣິກາ.

ທ່ານ ຢາງເພີຍຢວນ ກ່າວວ່າ: “ພຶດຕິກຳທີ່ທ່ານ ເຈີ້ງເຫີ ເດີນເຮືອໄປຢ້ຽມຢາມຫຼາຍປະເທດອາຊີ ແລະ ອາຟຣິກາ ໄດ້ເຊີດຊູກຳລັງໃຈຂອງຄົນ ທີ່ມັກຄົ້ນຄວ້າ ແລະ ພະຈົນໄພ, ຂ້ອຍຫວັງວ່າ, ນ້ຳໃຈ ເຈີ້ງເຫີ ຈະກາຍເປັນທອນໄຟເຍືອງທາງໃນການພະຈົນໄພຂອງພວກເຮົາ.”

ຢູ່ພາກຕາເວັນຕົກສ່ຽງເໜືອແຂວງຢຸນນານ, ທ່ານ ຢາງເພີຍຢວນ ແລະ ນາງ ອູໄອ້ລິງ ຍັງໄດ້ໄປຢ້ຽມຊົມເມືອງເກົ່າລີ້ຈຽງ (Lijiang), ໄດ້ມີຄວາມຊາບຊຶ້ງຕໍ່ວັດທະນະທຳ ນ້າຊີ (Naxi) ແລະ ສິ່ງກໍ່ສ້າງ ທີ່ມີເອກະລັກພິເສດຂອງເມືອງເກົ່າລີ້ຈຽງ. ຫຼັງຈາກນັ້ນ, ພວກເຂົາເຈົ້າໄດ້ເດີນທາງໄປເຖິງຮ່ອມພູເສືອໂດດ (Tiger Leaping Gorge) ທີ່ເປັນຈຸດໝາຍປາຍທາງໃນການຍ່າງທ່ຽວທີ່ມີຊື່ສຽງຂອງໂລກ, ສອງຄົນ ໄດ້ຮູ້ສຶກຊາບຊຶ້ງໃຈຕໍ່ທິວທັດທຳມະຊາດທີ່ເຫັນຍາກຂອງແຫ່ງນັ້ນ. ການຍ່າງທ່ຽວທີ່ເປັນເວລາ 3 ວັນ ໄດ້ສ້າງຄວາມປະທັບໃຈອັນລືມຍາກຫຼາຍຢ່າງໃຫ້ແກ່ເຂົາເຈົ້າ.

ເສັ້ນທາງຍ່າງທ່ຽວຢູ່ພາກໃຕ້ຂອງແຂວງຢຸນນານ ກໍໄດ້ເຮັດໃຫ້ເຂົາເຈົ້າ ສຳຜັດກັບການທ່ອງທ່ຽວສວນຊາຜູເອີ ຂອງແຂວງຢຸນນານ. ເຂົາເຈົ້າທັງສອງຄົນ ໄດ້ຂຶ້ນພູຈິງມ້າຍ ຂອງເມືອງປົກຄອງຕົນເອງເຜົ່າລາຫູລ້ານຊ້າງ, ໄດ້ຍ່າງເຂົ້າສູ່ສວນຊາບູຮານ ແລະ ບ້ານຊົນເຜົ່າ, ທ່ານ ຢາງເພີຍຢວນ ແລະ ນາງ ອູໄອ້ລິງ ຍັງໄດ້ໄປຢ້ຽມຊົມທິວທັດວັດທະນະທຳສວນຊາບູຮານເທິງພູຈິງມ້າຍ ນະຄອນຜູເອີ ທີ່ເປັນມໍລະດົກໂລກ ພ້ອມທັງໄດ້ສຳຜັດກັບປະຫວັດສາດວັດທະນະທຳຊາຢຸນນານ ແລະ ຮີດຄອງປະເພນີ ທີ່ມີຫຼາກຫຼາຍສີສັນຂອງທ້ອງຖິ່ນ.

ນາງ ອູໄອ້ລິງ ໄດ້ຊີມນ້ຳຊາຜູເອີ ທີ່ຊົງໂດຍ ນາງ ຢູ້ປາຍ (Yu Bai) ຜູ້ຊ່ຽວຊານຊາຜູເອີເຜົ່າລີ້ແລ້ວ, ຮູ້ສຶກແຊບທີ່ສຸດ. ນາງ ຢູ້ປາຍ ແລະ ທ່ານ ວິລຽມ ຜົວຂອງລາວ ທີ່ມາຈາກປະເທດຝຣັ່ງ ບໍ່ພຽງແຕ່ມີຄວາມຮູ້ກ່ຽວກັບໃບຊາທີ່ອຸດົມສົມບູນເທົ່ານັ້ນ, ຍັງເປັນຊ່າງຊົງນ້ຳຊາເຊັ່ນກັນ. ວັນເວລາທີ່ຢ້ຽມຢາມພູຈິງມ້າຍ, ທ່ານ ຢາງເພີຍຢວນ ແລະ ນາງ ອູໄອ້ລິງ ໄດ້ໄປຢ້ຽມຢາມບ້ານຊົນເຜົ່າບູຮານຕ່າງໆ ແລະ ຊີມຊາຜູເອີທີ່ມີຫຼາກຫຼາຍຊະນິດ.

ຂ່າວ: Mo Yingyi

(ສະໜອງຂໍ້ມູນໂດຍ: ສູນການສື່ສານສາກົນພາກພື້ນອາຊີໃຕ້–ອາຊີຕາເວັນອອກສ່ຽງໃຕ້ແຂວງຢຸນນານ)

ynzhanba@163.com
laos.yunnangateway.com




ວັນທີ 20 ມີນານີ້ ພໍດີຖືກກັບລະດູການຊຸນເຟິນ (Spring Equinox) ຕາມຈັນທະຄະຕິຈີນ, ດອກໄມ້ໃນທ້ອງຖິ່ນຕ່າງໆຂອງແຂວງຢຸນນານ ໄດ້ເລີ່ມເບັ່ງບານ, ຫຼາຍຄົນ ໄດ້ໂພສເສັ້ນທາງທ່ຽວຊົມດອກໄມ້ຢູ່ຕາມອິນເຕີເນັດ ເຊິ່ງໄດ້ດຶງດູດນັກທ່ອງທ່ຽວໄປທ່ຽວຊົມດອກໄມ້ຢູ່ແຫ່ງຕ່າງໆ.
ຂ່າວ/ຮູບໂດຍ: Chen Fei, Hu Yuya, Yang Zheng

# ໂຮງຮຽນໄດ້ສ້າງໂອກາດພັດທະນາ ໃຫ້ແກ່ພວກເຮົາ

ນາງ ມີນາ ກໍຄື ກັບເດັກນ້ອຍລາວທັງຫຼາຍ, ໄດ້ດຳລົງຊີວິດຢູ່ເຂດຫ່າງໄກສອກຫຼີກໃນຍາມຍັງນ້ອຍ. ບັງເອີນມີໂອກາດໄດ້ຍິນວ່າ, ຖ້າໄປຮຽນພາສາຈີນຢູ່ຈີນ, ຫຼັງຈາກຮຽນຈົບແລ້ວ ຈະສາມາດຊອກວຽກເຮັດງານທຳທີ່ດີ. ລາວ ກໍໄດ້ຕັດສິນໃຈ ໄປຮຽນພາສາຈີນ ຢູ່ໂຮງຮຽນຊັ້ນສູງວິຊາຊີບເມືອງຫຼ້າ ກິ່ງແຂວງປົກຄອງຕົນເອງເຜົ່າລີ້ສິບສອງພັນນາແຂວງຢຸນນານຈີນ.



ໃນໄລຍະ ຮຽນຢູ່ໂຮງຮຽນຊັ້ນສູງວິຊາຊີບເມືອງຫຼ້າ, ນາງ ມີນາ ໄດ້ຢືມເງິນນຳໝູ່ແລ້ວ ຊື້ສິນຄ້າຢູ່ຕາມເວັບໄຊ Taobao ຂອງຈີນ, ສົ່ງກັບຄືນປະເທດລາວ ໃຫ້ພີ່ນ້ອງຂາຍຊ່ວຍ. ໃນຂະນະດຽວກັນ, ນາງ ກໍໄດ້ຂາຍຄີມບຳລຸງຜິວຊະນິດໜຶ່ງຂອງແຂວງຢຸນນານ, ເລີ່ມການສ້າງທຸລະກິດຂອງຕົນ ໄປພ້ອມກັບການຮຽນ ມູນຄ່າຈຳໜ່າຍສິນຄ້າຂອງນາງ ກໍໄດ້ຫຼາຍກວ່າຕົວແທນຈຳໜ່າຍໃນທ້ອງຖິ່ນ. ນາງ ຍິ້ມແລ້ວເວົ້າວ່າ:“ນີ້ເປັນຕົ້ນທຶນກ້ອນທຳອິດສຳລັບຕົນ”. ປີ 2019, ນາງ ໄດ້ຮັບທຶນການສຶກສາສົມບູນຂອງມະຫາວິທະຍາໄລຮວາຊຽວ. ປັດຈຸບັນ, ລາວ ໄດ້ເປັນຕົວແທນຈຳໜ່າຍໃຫຍ່ 2 ຍີ່ຫໍ້ເຄື່ອງສຳອາງຂອງຈີນ ຢູ່ພາຍໃນປະເທດລາວ ແລະ ມີຕົວແທນຈຳໜ່າຍ 10 ກວ່າສາຂາ ຢູ່ທ້ອງຖິ່ນຕ່າງໆຂອງລາວ.

ນອກນັ້ນ, ຍັງມີຊາວໜຸ່ມລາວຫຼາຍຄົນ ສາມາດປ່ຽນແປງຊາຕາກຳຂອງຕົນ ໂດຍຜ່ານຈາກການໄປຮຽນຢູ່ໂຮງຮຽນຊັ້ນສູງວິຊາຊີບເມືອງຫຼ້າເຊັ່ນດຽວກັນກັບນາງມີນາ.

ນາງ ທອງຄຳມີ ທີ່ເຄີຍໄປຮຽນພາສາຈີນຢູ່ໂຮງຮຽນຊັ້ນສູງວິຊາຊີບເມືອງຫຼ້າ ໄດ້ສະໝັກເຂົ້າຮ່ວມການຝຶກອົບຮົມເປັນພະນັກງານຢູ່ຕາມທາງລົດໄຟ ລາວ-ຈີນ, ພາຍໃຕ້ການຊີ້ນຳ-ນຳພາ ຢ່າງຈິງຈັງຂອງອາຈານຈີນ, ນາງ ໄດ້ກາຍເປັນຫົວໜ້າປະຈຳຂະບວນລົດໄຟ ໝາຍເລກຂະບວນລ້ານຊ້າງ ຕາມທາງລົດໄຟ ລາວ-ຈີນ.

ນາງ ດາລີ ເປັນ ຄູສອນຢູ່ໂຮງຮຽນຊັ້ນສູງວິຊາຊີບເມືອງຫຼ້າ ກ່າວວ່າ: “ຂ້າພະເຈົ້າໄດ້ຮຽນຈົບຈາກໂຮງຮຽນຊັ້ນສູງວິຊາຊີບເມືອງຫຼ້າ ໃນປີ 2019. ພາຍຫຼັງຮຽນຈົບແລ້ວ, ຂ້າພະເຈົ້າ ກໍໄດ້ເປັນຄູສອນຢູ່ໂຮງຮຽນແຫ່ງນີ້. ຂ້າພະເຈົ້າຫວັງວ່າ, ຈະສາມາດຮ່ວມດຳລົງຊີວິດຢູ່ກັບໂຮງຮຽນຊັ້ນສູງວິຊາຊີບເມືອງຫຼ້າຕໍ່ໄປ ແລະ ສືບທອດມິດຕະພາບ ລະຫວ່າງປະຊາຊົນສອງຊາດລາວ - ຈີນ”.

ເມື່ອເວົ້າເຖິງໂຮງຮຽນຊັ້ນສູງວິຊາຊີບເມືອງຫຼ້າ, ຊາວໜຸ່ມລາວທີ່ເຄີຍໄດ້ຮັບຜົນປະໂຫຍດທີ່ດີເຫຼົ່ານີ້ ລ້ວນແຕ່ສະແດງຄວາມຮູ້ບຸນຄຸນຕໍ່ໂຮງຮຽນແຫ່ງນີ້ ແລະ ກ່າວວ່າ: “ໂຮງຮຽນແຫ່ງນີ້ ໄດ້ສ້າງໂອກາດການຮໍ່າຮຽນ ແລະ ການພັດທະນາໃຫ້ແກ່ພວກເຮົາ, ພວກເຮົາຂໍສະແດງຄວາມຮູ້ບຸນຄຸນຕໍ່ພີ່ນ້ອງຊາວຈີນທັງຫຼາຍ!”

ເມືອງຫຼ້າ ແຂວງຢຸນນານ ໄດ້ມີສາຍພູ ແລະ ແມ່ນ້ຳຕິດຈອດກັບປະເທດລາວ. ໂຮງຮຽນຊັ້ນສູງວິຊາຊີບເມືອງຫຼ້າ ໄດ້ຕັ້ງໜ້າຊຸກຍູ້ການຮ່ວມມື ແລະ ແລກປ່ຽນດ້ານການສຶກສາກັບຕ່າງປະເທດ. ນັບແຕ່ປີ 2001 ເປັນຕົ້ນມາ, ໂຮງຮຽນດັ່ງກ່າວ ໄດ້ປະກາດຮັບສະໝັກນັກຮຽນລາວ ຊຸດທຳອິດ ມາຮຽນພາສາຈີນຢູ່ໂຮງຮຽນແຫ່ງນີ້ ແລະ ແຕ່ລະຊຸດຈະຮຽນເປັນເວລາ 3 ປີ. ນອກຈາກຮຽນພາສາຈີນແລ້ວ, ຍັງໄດ້ຈັດໃຫ້ມີຫຼັກສູດຕ່າງໆ ເຊັ່ນ: ຄອມພິວເຕີ, ການປະຍຸກ ແລະສ້ອມແປງລົດ, ການຈໍລະຈອນສິນຄ້າສາກົນ, ທຸລະກິດເອເລັກໂຕຣນິກ, ວິຊາການສວນ, ການທ່ອງທ່ຽວສາກົນ ແລະອື່ນໆ ເພື່ອຍົກລະດັບຄວາມຮູ້ ແລະ ສີມືວິຊາການຂອງນັກຮຽນທັງຫຼາຍ ໃຫ້ສູງຂຶ້ນຢ່າງບໍ່ຢຸດຢັ້ງ. 20 ກວ່າປີຜ່ານມາ, ໂຮງຮຽນຊັ້ນສູງວິຊາຊີບເມືອງຫຼ້າ ໄດ້ອົບຮົມບົ່ມສ້າງນັກຮຽນລາວ ເກືອບ 3.000 ຄົນ.

ຂ່າວ: Zhang Xuefei, Diao Zhuoda, Zhang Nan, Yang Linkai; ພາບໂດຍ: Cha Wei